## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 25 ຕຸລາ 2020 (10-25-2020)

---

### ຄຳໝັ້ນສັນຍາຂອງພວກເຮົາທີ່ມີຕໍ່ອົງພຣະຄຣິດ

ບາງສິ່ງບາງຢ່າງທີ່ທ່ານມັກທີ່ຈະຕັ້ງໃຈເຮັດແມ່ນຫຍັງ?

**ຈຸດສຳຄັນໃນບົດຮຽນ:**ຈົ່ງຖວາຍຊີວິດຕລອດຊີວິດຂອງທ່ານດ້ວຍຄວາມໄວ້ວາງໃຈແລະເຊື່ອຟັງພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ລາຍການ "ໂທຣະພາບເປັນຈິງ" (Reality TV) ໄດ້ຢູ່ກັບພວກເຮົາເປັນເວລາ 20 ປີແລ້ວ, ແລະປະມານວ່າ 39 ເປີເຊັນຂອງຊາວອາເມຣິກັນເປີດເບິ່ງ, ແລະຄາດຄະເນວ່າມັນຈະບໍ່ຈົບລົງໃນອະນາຄົດອັນສັ້ນນີ້. ຕອນນຶ່ງຂອງລາຍການນີ້ທີ່ໄດ້ຮັບຄວາມນິຍົມສູງມີຜູ້ເຂົ້າແຂ່ງຂັນແກ້ໄຂບັນດາອຸປະສັກທີ່ຫຍຸ້ງຍາກສັບສົນເພື່ອຍາດເອົາຕຳແໜ່ງທີ່ເອີ້ນວ່າ "ນັກສູ້ອາເມຣິກັນນິນຈາ" (American Ninja Warrior). ມັນເປັນການແຈ່ມແຈ້ງທີ່ນັກກິລາເຫຼົ່ານີ້ໄດ້ຝຶກຊ້ອມຢ່າງໜັກໜ່ວງເປັນເວລາຫຼາຍເດືອນ. ມັນບໍ່ໄດ້ແມ່ນຄຳໝັ້ນສັນຍານ້ອຍໆເລີຍ.

ພວກເຮົາບໍ່ໄດ້ກຳລັງແຍ່ງຊີງເອົາຕຳແໜ່ງໃດໆ, ແຕ່ຊີວິດຂອງພວກເຮົາວົນວຽນຢູ່ກັບຄຳໝັ້ນສັນຍາຂອງພວກເຮົາຄືກັນ. ມອງເບິ່ງຢ່າງໄວໆໃນອາທິດທັມມະດາຈະເປີດເຜີຍຄຳໝັ້ນສັນຍາຂອງພວກເຮົາ ແລະ*ການເອົາຈິງເອົາຈັງຊ່ຳໃດຕໍ່ຄຳໝັ້ນສັນຍານັ້ນ!* ຄອບຄົວ, ເພື່ອນຝູງ, ວຽກງານ, ເສີມສ້າງວິຊາໃໝ່, ການຝຶກຝົນງານອະດິເຫຼກ, ແລະການອອກກຳລັງກາຍລ້ວນແຕ່ຮຽກຮ້ອງຄຳໝັ້ນສັນຍາໃນລະດັບໃດລະດັບນຶ່ງທັ້ງນັ້ນ. ແລະທັງໝົດເຫຼົ່ານີ້ຈະຜະເຊີນໜ້າກັບ "ດ່ານອຸປສັກ"(obstacle course) ຂອງການທ້າທາຍ.

ຄຳໝັ້ນສັນຍາຂອງພວກເຮົາເປີດເຜີຍສິ່ງທີ່ພວກເຮົາມັກ. ຄຳໝັ້ນສັນຍາຂອງພວກເຮົາເປີດເຜີຍໃຜເປັນຜູ້ທີ່ພວກເຮົາຮັກເຊັ່ນດຽວກັນ. ໃນພຣະຄັມພີ, ພວກເຮົາອ່ານເຣື່ອງຄຳໝັ້ນສັນຍາ, ແລະໂດຍສະເພາະຄວາມຮັກຂອງພຣະເຈົ້າທີ່ມີສຳລັບພວກເຮົາ. ພຣະອົງຊົງສັນຍາຕໍ່ພວກເຮົາຢ່າງເຕັມປ່ຽມ. ຄຳຖາມທີ່ແທ້ຈິງກໍຄື: ພວກເຮົາຈະຕອບສນອງຕໍ່ພຣະສັນຍານັ້ນດ້ວຍວິທີໃດ?

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ມາຣະໂກ10:13-16

*13 ແລະເຂົາໄດ້ອູ້ມເດັກນ້ອຍມາຫາພຣະອົງເພື່ອຈະໃຫ້ພຣະອົງຊົງຢຽດພຣະຫັດໃສ່ເຂົາແຕ່ພວກສາວົກໄດ້ ຫ້າມປາມ*
*ເຂົາໄວ້. 14 ເມື່ອພຣະເຢຊູຊົງເຫັນດັ່ງນັ້ນກໍເຄືອງພຣະທັຍຈຶ່ງຊົງກ່າວແກ່ພວກສາວົກວ່າ,"ຈົ່ງປ່ອຍໃຫ້ເດັກນ້ອຍເຂົ້າມາ*
*ຫາເຮົາຢ່າຫ້າມເຂົາເພາະວ່າຣາຊະແຜ່ນດິນຂອງພຣະເຈົ້າເປັນຂອງຄົນຢ່າງນີ້ແຫຼະ. 15 ເຮົາບອກທ່ານທັງຫຼາຍຕາມ*
*ຈິງວ່າຖ້າຜູ້ໃດບໍ່ຮັບຣາຊະແຜ່ນດິນຂອງພຣະເຈົ້າເໝືອນດັ່ງເດັກນ້ອຍຜູ້ນັ້ນຈະ ເຂົ້າໃນຣາຊະແຜ່ນດິນນັ້ນບໍ່ໄດ້ຈັກ*
*ເທື່ອ." 16 ແລ້ວພຣະອົງຊົງອູ້ມເດັກນ້ອຍເຫລົ່ານັ້ນຢຽດພຣະຫັດໃສ່ແລະ ອວຍພອນໃຫ້ເຂົາ.*

ໃນຂ່າວປະເສີດມາຣະໂກ, ພຣະເຢຊູຊົງໃຫ້ພາບທີ່ເຫັນໄດ້ຢ່າງຊັດເຈນແກ່ພວກເຮົາ ກ່ຽວກັບຄຳໝັ້ນສັນຍາແລະການເຊື່ອຟັງຕໍ່ພຣະອົງ. ພຣະອົງໄດ້ຊົງສັ່ງສອນ, ປິ່ນປົວຮັກສາແລະບັນດາຝູງຄົນໄດ້ນຳພາເດັກນ້ອຍລູກຫຼານມາຫາພຣະອົງ ເພື່ອວ່າພຣະອົງຈະໄດ້ຊົງສັມພັດ ແລະອວຍພຣະພອນເຂົາເຈົ້າ. ບັນດາອັຄສາວົກຂອງພຣະອົງບໍ່ມັກເຣື່ອງນີ້. ຄວາມຈິງແລ້ວ, ພວກເພິ່ນ "ຕຳໜິຕິຕຽນ" ພວກເຂົາ (ຝູງຄົນ). ຖ້າທ່ານຫຼຽວເບິ່ງສະຖານະການດ້ວຍມຸມ

ມອງຂອງພວກອັຄສາວົກ, ການຕິຕຽນຂອງພວກເພິ່ນນັ້ນກໍ່ມີຄວາມໝາຍ. ພຣະເຢຊູຊົງໄດ້ກະທຳສິ່ງທີ່ສຳຄັນແທ້ໆ, ແມ່ນບໍ່? ພຣະອົງໄດ້ຊົງສັ່ງສອນ, ປິ່ນປົວຮັກສາ, ແລະເສີມສ້າງພຣະຣາຊອານາຈັກຂອງພຣະເຈົ້າ. ນີ້ແມ່ນພຣະຣາຊກິຈທີ່ມີຜົນກະທົບຊົ່ວນິຣັນດອນ. ດັ່ງນັ້ນພຣະເຢຊູບໍ່ຊົງມີເວລາທີ່ຈະມາຫຼິ້ນກັບພວກເດັກນ້ອຍ.

ເມື່ອໃດທີ່ທ່ານໄດ້ເຫັນໃຜຜູ້ນຶ່ງ ທີ່ເຂົ້າມາຫາພຣະຄຣິດດ້ວຍຄວາມເຊື່ອເໝືອນເດັກນ້ອຍ?

ບັນດາອັຄສາວົກບໍ່ແມ່ນແຕ່ພວກດຽວທີ່ໄດ້ເຮັດການຕິຕຽນໃນວັນນັ້ນ. ອົງພຣະເຢຊູກໍ່ໄດ້ຊົງກະທຳເຊັ່ນດຽວກັນແຕ່ພຣະອົງໄດ້ຕຳໜິອັຄສາວົກຂອງພຣະອົງຢ່າງກົງໄປກົງມາ. ພຣະເຢຊູໄດ້ຊົງເຍາະເຍີ້ຍພວກອັຄສາວົກເພາະການຕິຕຽນປະຊາຊົນ. ໃນຄຳຕຳໜິຕິຕຽນຂອງພຣະອົງ, ພຣະອົງໄດ້ຊົງກ່າວສອງຄຳເວົ້າທີ່ໜ້າສົນໃຈດັ່ງນີ້:

- "ຈົ່ງປ່ອຍໃຫ້ເດັກນ້ອຍເຂົ້າມາຫາເຮົາຢ່າຫ້າມເຂົາເພາະວ່າຣາຊແຜ່ນດິນຂອງພຣະເຈົ້າເປັນຂອງຄົນຢ່າງນີ້ແຫຼະ." (ຂໍ້ 14) ພຣະຣາຊອານາຈັກຂອງພຣະເຈົ້າເປັນຂອງປະຊາຊົນທີ່ປຽບສະເໝືອນພວກເດັກນ້ອຍເຫຼົ່ານີ້.
- "ຖ້າຜູ້ໃດບໍ່ຮັບຣາຊແຜ່ນດິນຂອງພຣະເຈົ້າເໝືອນດັ່ງເດັກນ້ອຍ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນນັ້ນບໍ່ໄດ້ຈັກເທື່ອ." (ຂໍ້15) ພຣະຄຳຂໍ້ນີ້ຄົງຈະເຮັດໃຫ້ບັນດາອັຄສາວົກທັງຫຼາຍຕົກຕລຶງເພາະວ່າຄຳສົມມຸດແມ່ນວ່າຜູ້ທີ່ໄດ້ຮຽນຮູ້ຫຼາຍທີ່ສຸດໃນເຣື່ອງຂອງພຣະເຈົ້າເທົ່ານັ້ນທີ່ຈະມີຄວາມສຳເຣັດໃນການເຂົ້າໄປໃນພຣະຣາຊອານາຈັກຂອງພຣະເຈົ້າ. ແຕ່ອົງພຣະເຢຊູໄດ້ຊົງກ່າວວ່າ: ບັນດາຝູງຊົນທັງຫຼາຍຕ້ອງເປັນເໝືອນ "**<u>ເດັກນ້ອຍ</u>**" ເພື່ອຈະເຂົ້າໄປ ໃນພຣະຣາຊອານາຈັກຂອງພຣະເຈົ້າ. ນອກເສັ່ຽຈາກວ່າພວກເຮົາເຂົ້າມາຫາພຣະເຈົ້າເໝືອນເດັກນ້ອຍ-ເດັກນ້ອຍທີ່ຍັງບໍ່ທັນຈົມຢູ່ກັບຄວາມກັງວົນຂອງໂລກ(ຄືໄຮ້ດຽງສາ)-ມີແຕ່ພຽງຕ້ອງການຢູ່ກັບ ແລະເຮັດໃຫ້ພໍພຣະທັຍຂອງພຣະບິດາຂອງພວກເຂົາເຈົ້າເທົ່ານັ້ນ; ແລະໃນເມື່ອນັ້ນເອງເທົ່ານັ້ນທີ່ພວກເຮົາຈະສາມາດເຂົ້າໄປໃນພຣະຣາຊອານາຈັກຂອງພຣະເຈົ້າ. ການເຂົ້າໄປໃນພຣະຣາຊອານາຈັກຂອງພຣະເຈົ້າບໍ່ໄດ້ກ່ຽວຫຍັງກັບລະດັບໜ້າທີ່, ອຳນາດ, ການສຶກສາ, ຫຼືຍົດຖາບັນດາສັກໃນສັງຄົມ. <u>ການເຂົ້າໄປໃນພຣະຣາຊອານາຈັກຂອງພຣະອົງມີທຸກສິ່ງທີ່ກ່ຽວຂ້ອງກັບທ່າທາງຂອງຫົວໃຈຂອງພວກເຮົາ.</u>

## 2. <u>ມາຣະໂກ 10:17-20</u>

*[17]ເມື່ອພຣະອົງສະເດັດອອກໄປກາງທາງມີຄົນນຶ່ງແລ່ນມາຫາພຣະອົງຄຸເຂົ່າລົງທູນຖາມພຣະອົງວ່າ, "ອາຈານຜູ້ປະເສີດເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຈຶ່ງຈະໄດ້ຮັບຊີວິດອັນຕລອດໄປເປັນນິດມາເປັນມໍຣະດົກ." [18] ພຣະເຢຊູຊົງຕອບວ່າ "**ເປັນຫຍັງທ່ານຈຶ່ງເອີ້ນເຮົາວ່າຜູ້ປະເສີດ** ບໍ່ມີໃຜປະເສີດເວັ້ນແຕ່ພຣະເຈົ້າອົງດຽວເທົ່ານັ້ນ. [19]ທ່ານຮູ້ຈັກຂໍ້ພຣະບັນຍັດແລ້ວວ່າ 'ຢ່າຂ້າຄົນ, ຢ່າມິດສາຈານຈາກຜົວຈາກເມັຽ, ຢ່າລັກຊັບ, ຢ່າເປັນພະຍານບໍ່ຈິງ, ຢ່າສໍ້ໂກງ, ຈົ່ງນັບຖືບິດາມານດາຂອງຕົນ'." [20]ຄົນນັ້ນໄດ້ທູນຕອບວ່າ, "ອາຈານເອີຍ, ຂໍ້ເຫຼົ່ານັ້ນຂ້ານ້ອຍໄດ້ຮັກສາໄວ້ຕັ້ງແຕ່-ເປັນເດັກນ້ອຍມາ."*

ໃນທັນທີທັນໃດຫຼັງຈາກເຣື່ອງລາວຂອງເດັກນ້ອຍ, ມາຣະໂກໄດ້ເວົ້າເຖິງເຣື່ອງເຫດການອື່ນອີກເພື່ອຊ່ອຍໃຫ້ພວກເຮົາເຫັນວ່າການເຊື່ອຟັງອົງພຣະເຢຊູທີ່ແທ້ຈິງນັ້ນແມ່ນຫຍັງກັນແທ້. ເຣື່ອງນີ້ຄວນເຮັດໃຫ້ແມ້ແຕ່ຜູ້ຕິດຕາມພຣະຄຣິດທີ່ເຄັ່ງຄັດທີ່ສຸດໃນບັນດາພວກເຮົາຢຸດສຳນຶກແລະປະເມີນຜົນຫົວໃຈແລະຄວາມສຳພັນຂອງລາວກັບພຣະເຈົ້າ. ການຜະເຊີນໜ້າຄັ້ງນີ້ກ່ຽວຂ້ອງກັບຊາຍຄົນນຶ່ງທີ່ຮັ່ງມີ (ມຣກ 10:22). ຜູ້ຂຽນພຣະຄັມພີຄົນອື່ນໄດ້ບັນລະຍາຍລາວເໝືອນກັບວ່າເປັນຄົນທີ່ໜຸ່ມແໜ້ນ (ມທ 19:20), ແລະ ເປັນຄົນທີ່ມີອຳນາດການປົກຄອງ (ລກ 18:18).

ຄຳຖາມຂອງຊາຍທີ່ຮັ່ງມີຄົນນີ້ແມ່ນຄຳຖາມແບບທົ່ວໄປ, ແມ່ນຄຳຖາມທີ່ທ່ານເອງອາດຈະໄດ້ຖາມໃນເວລາໃດເວລານຶ່ງ "ຂ້ອຍຈະຕ້ອງເຮັດຫຍັງແດ່ເພື່ອຈະໄດ້ຊີວິດນິຣັນນັ້ນມາເປັນມູນມໍຣະດົກ?" ຊາຍໜຸ່ມຄົນນີ້ພະຍາຍາມຫາທາງເຂົ້າສູ່ສວັນໂດຍການປະຕິບັດຄວາມດີ. ຂ້າພະເຈົ້າວາດພາບຂອງລາວກຳລັງຢືນຢູ່ຄຽງຂ້າງອົງພຣະເຢຊູແລະບັນດາອັຄສາວົກທັງຫຼາຍ, ຈັບປື້ມຂຽນຢູ່ໃນມື, ລໍຖ້າຄຳຕອບທີ່ເລິກເຊິ່ງຂອງພຣະເຢຊູ. ລາວຕຽມຕົວແລະພ້ອມທີ່ຈະບັນທຶກບັນຊີ "ລາຍການທີ່ຈະຕອ້ງເຮັດເພື່ອ ເຂົ້າສູ່ສວັນ" ("**Get into** HeavenTo-**Do**") list.

| ເປັນຫຍັງການເຊື່ອຟັງຂອງຊາຍຄົນນີ້ຈຶ່ງຍັງບໍ່ດີພໍສຳລັບການເຂົ້າສູ່ສວັນ? |
|---|

ພຣະເຢຊູໄດ້ຊົງໃຫ້ລາຍການບັນຊີກວດກາທີ່ຊາຍໜຸ່ມຄົນນັ້ນສແວງຫາ ດັ່ງນີ້:

- **ຢ່າຂ້າຄົນ.**
- **ຢ່າລ່ວງເກີນຜົວເມັຽຜູ້ອື່ນ.**
- **ຢ່າລັກຊັບ.**
- **ຢ່າຕົວະ.**
- **ຈົ່ງນັບຖືບິດາມານດາຂອງເຈົ້າ.**

ອົງພຣະເຢຊູໄດ້ຊົງໃຊ້ພຣະບັນຍັດເຫຼົ່ານີ້ໂດຍສະເພາະມັນເປັນການຮູ້ຈັກດີສຳລັບຊາຍຊາວຢິວຄົນນີ້ ແລະນີ້ແມ່ນພາກສ່ວນນຶ່ງຂອງ ພຣະບັນຍັດສິບປະການ ຊຶ່ງແມ່ນການກ່ຽວຂ້ອງກັບຄົນອື່ນ. ຊາຍໜຸ່ມຄົງຄິດໃນໃຈຕົນເອງວ່າ: "ຫວານ!" ເຮົາໄດ້ເຮັດສິ່ງທັງໝົດນີ້ແລ້ວ, ຕັ້ງແຕ່ເປັນເດັກນ້ອຍມາ.""ອາຈານເອີຍ, ຂໍ້ເຫຼົ່ານັ້ນຂ້ານ້ອຍໄດ້ຮັກສາໄວ້ຕັ້ງແຕ່ຍັງເປັນເດັກນ້ອຍມາ." (ຂໍ້ 20). ແຕ່ຂອບເຂດຂອງຄວາມເຊື່ອຂອງລາວກຳລັງຈະຖືກເປີດເຜີຍໃຫ້ເຫັນຢ່າງເຕັມລົ້ນ. **ພຣະເຢຊູກຳລັງຈະຊົງຖິ້ມຣະເບີດລົງໃສ່ຄວາມຄິດຂອງຊາຍຄົນນີ້:**

## 3.ມາຣະໂກ10:21-22

*21ພຣະເຢຊູຊົງເພັ່ງເບິ່ງຜູ້ນັ້ນກໍຊົງຮັກເພິ່ນແລ້ວຊົງກ່າວວ່າ, "ທ່ານຍັງຂາດຢູ່ສິ່ງນຶ່ງຄືຈົ່ງໄປຂາຍບັນດາສິ່ງຂອງຊຶ່ງ*
*ທ່ານມີຢູ່ແຈກທານແກ່ຄົນອະນາຖາແລ້ວທ່ານຈະມີຊັບສົມບັດໃນສວັນແລະຈົ່ງຕາມເຮົາມາເສັຽ." 22ເມື່ອໄດ້ຍິນຄຳ*
*ນັ້ນໜ້າຂອງເພິ່ນກໍເສົ້າລົງຄົນນັ້ນກໍອອກໄປເປັນທຸກໜັກໃຈເພາະຕົນມີຊັບສິ່ງຂອງຈຳນວນຫຼາຍ.*

ພຣະເຢຊູໄດ້ຊົງວາງສເນີຄວາມຮຽກຮ້ອງຢ່າງໃຫຍ່ຫຼວງຕໍ່ຊາຍໜຸ່ມຄົນນັ້ນ. ພຣະອົງໄດ້ຊົງກ່າວດ້ວຍຄວາມໝາຍວ່າ "ແມ່ນແລ້ວ, ເຈົ້າໄດ້ເຮັດດີຖືກຕ້ອງແລ້ວ, ແຕ່ຍັງມີສິ່ງນຶ່ງທີ່ຍັງຂາດຢູ່. ເຈົ້າຍັງຮັກເງິນຢູ່. ຈົ່ງໃຫ້ເງິນຂອງເຈົ້າທັງໝົດແກ່ຄົນທີ່ທຸກຍາກອະນາຖາ, ແລ້ວຈົ່ງຕາມເຮົາມາ". ນັ້ນຟັງແລ້ວຄືຮຸນແຮງແຕ່ນີ້ບໍ່ແມ່ນຄຳເວົ້າເພື່ອຄົນທົ່ວໄປທີ່ພວກເຮົາທຸກຄົນໄດ້ຊົງຖືກຮຽກຮ້ອງໃຫ້ປະຕິບັດ.

| ແມ່ນອຸປສັກແນວໃດແດ່ທີ່ປ້ອງກັນບາງຄົນຈາກຄຳໝັ້ນສັນຍາທັງໝົດຕໍ່ອົງພຣະຄຣິດ? |
|---|

ສລະກັມສິດສິ່ງຂອງທີ່ພວກເຮົາມີບໍ່ແມ່ນຈຸດສຳຄັນຂອງເຣື່ອງນີ້. ຂ່າວປະເສີດບໍ່ໄດ້ບັນທຶກເວລາອື່ນທີ່ພຣະເຢຊູໄດ້ຊົງຮຽກເອີ້ນໃຫ້ໃຜຜູ້ນຶ່ງກະທຳເຊັ່ນນັ້ນ. ໃນການຕິດຕາມພຣະເຢຊູ, ຊັກຂາຍໄດ້ສລະຊັບສົມບັດເຄິ່ງນຶ່ງໃຫ້ແກ່ຜູ້ຍາກຈົນອະນາຖາແລະຈ່າຍໜີ້ໃຫ້ແກ່ເຈົ້າໜີ້ເຖິງສີ່ເທົ່າ (ລກ 19:1-10). ໃນຄຳອຸປມາຂອງພຣະເຢຊູກ່ຽວເຣື່ອງເງິນມະນາ, ພຣະເຢຊູໄດ້ຊົງຮຽກເອີ້ນໃຫ້ພວກເຮົາຊົດໃຊ້ຊັບສົມບັດທີ່ພວກ ເຮົາມີດ້ວຍຄວາມສລາດສຳລັບພຣະຣາຊອານາຈັກຂອງພຣະອົງ (ລກ 19:11-17). ດັ່ງນັ້ນເປັນຫຍັງພຣະເຢຊູຈຶ່ງໄດ້ຊົງຮຽກຮ້ອງຄຳບັນຊາທີ່ຮຸນແຮງຈາກຊາຍຄົນນີ້? ພຣະເຢຊູຊົງຮູ້ວ່າຊາຍຄົນນີ້ຮັກຊັບສົມບັດຂອງລາວຫຼາຍກວ່າພຣະອົງ. ພຣະເຢຊູຊົງຮູ້ວ່າ: ທ້າຍ

ສຸດແລ້ວ, ເງິນໄດ້ນັ່ງຢູ່ເທິງບັນລັງຫົວໃຈຂອງຊາຍຄົນນີ້, ບໍ່ແມ່ນພຣະເຈົ້າ(ເປັນເຈົ້າຫົວໃຈຂອງລາວ). ດັ່ງນັ້ນພຣະເຢຊູງມອງຜ່ານຄວາມເຊື່ອເຜີນໆຂອງລາວແລະກົງໄປສູ່ສິ່ງທີ່ລາວຮັກຫຼາຍກວ່າທຸກສິ່ງ:*ເງິນແລະຊັບສົມບັດ*.*"ຊົງທອດພຣະເນດເຫັນຊາຍຄົນນີ້ ພຣະເຢຊູຊົງຮັກລາວ"*. ຊາຍໜຸ່ມຕ້ອງການຊີວິດນິຣັນ, ອົງພຣະເຢຊູມີພຣະປະສົງເຊັ່ນນັ້ນເໝືອນກັນ. ລາວໄດ້ຍິນຄຳຕອບຕໍ່ຄຳຖາມຂອງລາວແຕ່ມັນເປັນຄຳຕອບທີ່ລາວບໍ່ປາຖນາໄດ້ຍິນຫຼືຄາດຫວັງເອົາໄວ້. ລາວຮັກເງິນຂອງລາວຫຼາຍກວ່າລາວຮັກພຣະເຈົ້າ (ອົງພຣະເຢຊູ).

ມັນເປັນເຣື່ອງຍາກຫຼາຍທີ່ຈະໄດ້ຮັບສິ່ງຂອງທາງໂລກຄືເງິນຂອງບັນລັງຂອງຫົວໃຈຂອງພວກເຮົາ, ແຕ່ວ່າ, ເວັ້ນເສັຽແຕ່ວ່າພຣະເຢຊູມີຕຳແໜ່ງອັນດັບນຶ່ງໃນບັນລັງນັ້ນ, ພວກເຮົາຈະບໍ່ສາມາດເຂົ້າໄປໃນອານາຈັກສວັນໄດ້. ພຣະເຈົ້າຊົງມີພຣະປະສົງໝາກຫົວໃຈຂອງພວກເຮົາ-**ທັງໝົດຈິດໝົດໃຈ**. ຫົວໃຈທີ່ມຸ່ງໝັ້ນບໍ່ໄດ້ອະນຸຍາດໃຫ້ພວກເຮົາເຂົ້າໄປໃນອານາຈັກຂອງພຣະເຈົ້າ. ກົງກັນຂ້າມ, ຫົວໃຈທີ່ມຸ່ງໝັ້ນແມ່ນຂໍ້ພິສູດສະແດງໃຫ້ເຫັນວ່າ: ພວກເຮົາໄດ້ຮັບອະນຸຍາດ(ໄດ້ມີສິດ)ເຂົ້າເຖິງພຣະຣາຊອານາຈັກຂອງພຣະເຈົ້າແລ້ວ.

## ນຳໃຊ້ໃນຊີວິດ

ທ່ານຈະສະແດງຄຳໝັ້ນສັນຍາຂອງທ່ານຕໍ່ອົງພຣະຄຣິດຢ່າງໃດໃນອາທິດນີ້? ເລືອກເອົານຶ່ງການນຳໃຊ້ຕໍ່ລົງໄປນີ້:

- **ຈົ່ງໄວ້ວາງໃຈ.** ຖ້າຫາກທ່ານໄດ້ພະຍາຍາມເປັນຄົນດີແລະມີສິນທັມເພື່ອຈະໄດ້ຮັບຕຳແໜ່ງທີ່ດີຈາກພຣະເຈົ້າ, ຈົ່ງຍອມຮັບຄວາມໄຮ້ປໂຍດຂອງມັນເຖີດ. ຈົ່ງໄວ້ວາງໃຈໃນອົງພຣະຄຣິດ ແລະຈົ່ງເຊື່ອຟັງພຣະດຳຣັດຂອງພຣະອົງເພື່ອເປັນການຕອບສນອງຕໍ່ພຣະຄຸນຂອງພຣະອົງໃນຊີວິດຂອງທ່ານ.
- **ຈົ່ງກວດສອບ.** ຈົ່ງກວດກາຫົວໃຈຂອງທ່ານແລະພິຈາຣະນາເບິ່ງ-ເໝືອນກັບຊາຍທີ່ຮັ່ງມີ-ວ່າມີສິ່ງໃດທີ່ນັ່ງຢູ່ໃນບັນລັງຫົວໃຈຂອງທ່ານຊຶ່ງນອກເໜືອໄປກວ່າອົງພຣະຄຣິດ? ອາດຈະແມ່ນ: ເງິນ, ອຳນາດ, ຄວາມສະບາຍ, ການຄວບຄຸມ, ຄວາມປອດພັຍ, ການອະນຸມັດ, ຫຼື ການຮັບຮູ້. ຈົ່ງທູນຂໍຕໍ່ພຣະອົງໃຫ້ຊົງເປີດເຜີຍສິ່ງເຫຼົ່ານັ້ນແກ່ທ່ານແລະຈົ່ງໃຫ້ສະຖານທີ່ (ຕຳແໜ່ງ) ອັນຊອບທັມແກ່ພຣະອົງເທິງບັນລັງຊີວິດຂອງທ່ານ.
- **ຈົ່ງຕໍ່ອາຍຸ.** ຖ້າຫາກທ່ານສູນເສັຽຄວາມຮັກແລກສຳລັບພຣະຄຣິດ, ແລະບໍ່ໄດ້ເຂົ້າມາຫາພຣະອົງໃນແຕ່ລະວັນເໝືອນເດັກນ້ອຍ, ຈົ່ງຈຸດແສງປະກາຍຄວາມສັມພັນກັບພຣະອົງຄືນໃໝ່. ຈົດບັນທຶກບາງວິທີທາງຫຼືບາງສິ່ງທີ່ປ້ອງກັນທ່ານບໍ່ໃຫ້ມີຄວາມເຊື່ອເໝືອນເດັກນ້ອຍໃນພຣະເຈົ້າ ແລະຈົ່ງທູນຂໍຕໍ່ພຣະອົງໃຫ້ຊົງຊ່ອຍທ່ານກັບມາສູ່ສະຖານທີ່ນັ້ນອີກໃໝ່. ພວກເຮົາຢາກຈະເຫັນຜູ້ຄົນມີຄວາມສຳເຣັດໃນບາງສິ່ງບາງຢ່າງດ້ວຍຄຳໝັ້ນສັນຍາທີ່ໂດດເດັ່ນຂອງພວກເພິ່ນ.

**ຈົ່ງຈຳໄວ້ວ່າ**: ພຣະເຈົ້າຊົງໃຫ້ຄຳໝັ້ນສັນຍາຂອງພຣະອົງແກ່ພວກເຮົາກ່ອນ. ແລະຍ້ອນຄຳໝັ້ນສັນຍາຕໍ່ພວກເຮົານັ້ນ, ພວກເຮົາສາມາດຕອບສນອງຕໍ່ພຣະອົງໄດ້**ດ້ວຍພຣະກຳລັງແລະພຣະອຳນາດຂອງພຣະອົງທີ່ຊົງປະທານໃຫ້.**

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນhttp://lsbf.us/ ໂດຍSSK**